**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ບໍລິສັດ ດັກລັກ ຣັບເບີ ຈຳກັດ**

DAKLAORUCO ເລກທີ: 15/ລບ-ບສ

ປາກເຊ, ວັນທີ 10 ເດືອນ 07 ປີ 2023

# ກົດລະບຽບ

## ວ່າດ້ວຍການເຄົາລົບສິດຂອງຊຸມຊົນໃນພື້ນທີ່ທີ່ບໍລິສັດດຳເນີນກິດຈະການ

ບໍລິສັດ ດັກລັກ ຣັບເບີ ຈຳກັດ (DAKLAORUCO) ເປັນຫົວໜ່ວຍທຸລະກິດດ້ານປ່າໄມ້ ປະຈຸບັນຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ 9.301,60 ເຮັກຕາ. ບໍລິສັດລວມມີ 4 ນິຄົມ ຢາງພາລາ ແລະ ທີ່ດິນປ່າໄມ້ ເທິງພື້ນທີ່ໃນບັນດາບ້ານດັ່ງນີ້:

ນິຄົມ 1 - ບ້ານ ໃໝ່ສີວິໄລ - ເມືອງບາຈຽງ - ແຂວງຈຳປາສັກ.

ນິຄົມ 2 - ບ້ານ ວັງຄະນານ - ເມືອງ ເລົ່າງາມ - ແຂວງ ສາລະວັນ.

ນິຄົມ 3 - ບ້ານ ໜອງປັກແຮດ - ເມືອງ ປະທຸມພອນ - ແຂວງຈຳປາສັກ.

ນິຄົມ 4 - ບ້ານ ໜອງແກ - ເມືອງ ເລົ່າງາມ - ແຂວງ ສາລະວັນ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່: ບ້ານທ່າຫຼວງ - ນະຄອນປາກເຊ - ແຂວງຈຳປາສັກ.

ເພື່ອຄຸ້ມຄອງປ່າໄມ້ໃຫ້ຍືນຍົງແລະເປັນການປະກອບສ່ວນພັດທະນາເສດຖະກິດທ້ອງຖິ່ນ, ສ້າງວຽກເຮັດງານທຳ, ເພີ່ມລາຍຮັບໃຫ້ປະຊາຊົນຈາກການຂຸດຄົ້ນຢາງພາລາ, ໄມ້ ແລະ ຊັບພະຍາກອນອື່ນໆຈາກປ່າໄມ້, ທີ່ສອດຄ່ອງຕາມມາດຕະຖານ FSC STD V5.1, ບໍລິສັດ ດັກລັກ ຣັບເບີ ຈຳກັດໄດ້ວາງ “ ກົດລະບຽບວ່າດ້ວຍການເຄົາລົບສິດຂອງຊຸມຊົນໃນພື້ນທີ່ທີ່ດຳເນີນກິດຈະການຂອງບໍລິສັດ” ດັ່ງນີ້:

### 1. ຈຸດປະສົງ ແລະ ຄວາມຕ້ອງການ

#### 1.1. ຈຸດປະສົງ

ເພື່ອຈັດຕັ້ງການຜະລິດ ແລະ ດຳເນີນທຸລະກິດໃຫ້ມີປະສິດທິຜົນ, ແຜນການຜະລິດຕ້ອງສອດຄ່ອງກັບການວາງແຜນພັດທະນາເສດຖະກິດສັງຄົມຂອງທ້ອງຖິ່ນ; ສົ່ງເສີມການເປີດກວ້າງທາງດ້ານປະຊາທິປະໄຕ ແລະ ສ້າງຜົນປະໂຫຍດສູງສຸດຈາກປ່າໄມ້ເພື່ອຮັບໃຊ້ຜົນປະໂຫຍດຂອງບໍລິສັດ ແລະ ຊຸມຊົນທ້ອງຖິ່ນ.

#### 1.2. ຄວາມຕ້ອງການ

ບັນດາໜ່ວຍງານທີ່ສັງກັດຢູ່ບໍລິສັດ ແລະ ພະນັກງານກຳມະກອນທັງໝົດໃນບໍລິສັດຕ້ອງປະຕິບັດຕາມກົດລະບຽບສະບັບນີ້ຢ່າງເຂັ້ມງວດ, ໃນຂະບວນການຈັດຕັ້ງການຜະລິດ, ປະຕິບັດວຽກງານຄຸ້ມຄອງປ່າໄມ້. ເຜີຍແຜ່ກົດລະບຽບສະບັບນີ້ໃຫ້ທຸກຄົນຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ.

2. ກົດລະບຽບສະເພາະ.

2.1. ເຄົາລົບແຜນການ, ການຈັດສັນທ້ອງຖິ່ນ ແລະ ກົດໝາຍ.

- ແຜນການຜະລິດທຸລະກິດຂອງບໍລິສັດຕ້ອງສອດຄ່ອງກັບແຜນການຈັດສັນ, ຂອງແຂວງ, ເມືອງ, ບ້ານທີ່ບໍລິສັດກໍາລັງດໍາເນີນກິດຈະການ.

- ພະນັກງານກໍາມະກອນທັງໝົດໃນບໍລິສັດ ຕ້ອງປະຕິບັດທຸກນະໂຍບາຍ ແລະ ແນວທາງຂອງພັກ ແລະ ລັດຢ່າງເຂັ້ມງວດ; ຫ້າມສ້າງປະກົດການຫຍໍ້ທໍ້ໃຫ້ສັງຄົມ ແລະ ຫ້າມລະເມີດກົດຫມາຍວ່າດ້ວຍຄວາມປອດໄພຈະລາຈອນ. ພະນັກງານທີ່ຮັບຜິດຊອບຕ້ອງເຂົ້າຮ່ວມປະຊຸມສະຫຼຸບປະຈໍາເດືອນ, ປະຈໍາໄຕມາດ, ປະຈໍາປີ ແລະ ເມື່ອຖືກເຊີນ.

2.2. ເຄົາລົບສິດທິຂອງຊຸມຊົນທ້ອງຖິ່ນ

- ບໍລິສັດເຄົາລົບສິດທີ່ປະຕິບັດມາແຕ່ດັ້ງເດີມ, ຜົນປະໂຫຍດທາງດ້ານກົດໝາຍ ຂອງຊຸມຊົນທ້ອງຖິ່ນ, ພິເສດແມ່ນຊຸມຊົນຂອງບັນດາຊົນເຜົ່າທີ່ມີຄົນຈໍານວນນ້ອຍໃນການນໍາໃຊ້ຊັບພະຍາກອນປ່າໄມ້, ການນໍາໃຊ້ທີ່ດິນ ແລະ ການປູກຝັງ.

- ຄວາມຮູ້ພື້ນເມືອງຂອງຊຸມຊົນທ້ອງຖິ່ນຕ້ອງໄດ້ຮັບການເຄົາລົບຈາກບໍລິສັດ. ໃນກໍລະນີທີ່ບໍລິສັດຈະນໍາໃຊ້ຄວາມຮູ້ພື້ນເມືອງຂອງຊຸມຊົນເຂົ້າໃນການດໍາເນີນທຸລະກິດຕ້ອງໄດ້ຮັບການອະນຸຍາດຈາກຕົວແທນຊຸມຊົນກ່ອນ, ພ້ອມກັນນັ້ນຕ້ອງຈ່າຍເງິນສໍາລັບການນໍາໃຊ້ຄວາມຮູ້ດັ່ງກ່າວ.

- ບໍລິສັດເຄົາລົບ ແລະ ບໍ່ລະເມີດຂອບເຂດ/ເນື້ອທີ່ທີ່ຊຸມຊົນທ້ອງຖິ່ນນໍາໃຊ້ເຊັ່ນ: ປ່າປ້ອງກັນ, ປ່າສັກສິດ, ປ່າຊ້າ,ວັດວາອາຮາມ... ທີ່ຖືກມອບໝາຍ ຫຼື ຄຸ້ມຄອງຕາມຮີດຮອງປະເພນີ.

2.3. ເຄົາລົບຮີດຄອງປະເພນີ

- ພະນັກງານກໍາມະກອນທັງໝົດໃນບໍລິສັດຕ້ອງມີໜ້າທີ່ເຂົ້າຮ່ວມໃນການເຄື່ອນໄຫວກິດຈະກໍາຂອງທ້ອງຖິ່ນ, ກິດຈະກໍາບໍລິຈາກ, ກິດຈະກໍາສາທາລະນະປະໂຫຍດທີ່ທ້ອງຖິ່ນບ່ອນສໍານັກງານຕັ້ງຢູ່. ມີສາຍພົວພັນແບບໃກ້ຊິດກັບປະຊາຊົນ ແລະ ອໍານາດການປົກຄອງທ້ອງຖິ່ນໃນພື້ນທີ່; ມີຄວາມສະໝັກໃຈໃນການຊ່ວຍເຫຼືອ - ກູ້ໄພ; ຊ່ວຍເຫຼືອຜູ້ທີ່ປະສົບກັບຄວາມຫຍຸ້ງຍາກເພື່ອພ້ອມກັນພັດທະນາ, ປະກອບສ່ວນໃນການລຶບລ້າງຄວາມອຶດຫິວ, ຫຼຸດຜ່ອນຄວາມທຸກຍາກ, ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ.

- ເຂົ້າຮ່ວມການປົກປັກຮັກສາເອກະລັກຂອງຊົນເຜົ່າ, ເຄົາລົບວັດທະນະທໍາ, ຮີດຄອງປະເພນີ, ຄວາມເຊື່ອທາງດ້ານສາສະໜາຂອງທ້ອງຖິ່ນ.

2.4. ປະຕິບັດການເປີດກວ້າງທາງດ້ານປະຊາທິປະໄຕໃນການຜະລິດ

- ແຈ້ງແຜນການຜະລິດໃຫ້ທ້ອງຖິ່ນໄດ້ຮັບຮູ້(ຖ້າບໍ່ແມ່ນແຜນການທີ່ເປັນຂໍ້ມູນລັບ); ຮູບແບບການແຈ້ງອາດຈະແຈ້ງເປັນລາຍລັກອັກສອນ, ຈັດຕັ້ງກອງປະຊຸມສະຫຼຸບຜົນງານ, ກອງປະຊຸມຜັນຂະຫຍາຍແຜນການ, ພົບປະແລກປ່ຽນ ແລະ ຮູບແບບອື່ນໆເພື່ອໃຫ້ອໍານາດການປົກຄອງທ້ອງຖິ່ນ ແລະ ປະຊາຊົນໃນພື້ນທີ່ໄດ້ຮັບຮູ້ເຖິງການເຄື່ອນໄຫວຂອງບໍລິສັດ ຢູ່ທ້ອງຖິ່ນ; ຈາກນັ້ນ, ມີການປະສານສົມທົບຫຼາຍດ້ານ, ນໍາມາເຊິ່ງຜົນປະໂຫຍດໃຫ້ທຸກຝ່າຍ ແລະ ຊຸມຊົນ.

- ຮັບຟັງຄຳເຫັນຈາກບັນດາທ້ອງຖິ່ນ ແລະ ຊຸມຊົນໃນເຂດດັ່ງກ່າວຜ່ານກອງປະຊຸມ, ກ່ອງປະກອບຄຳເຫັນ...; ຈາກນັ້ນ, ສັງລວມ ແລະ ເລືອກເຟັ້ນຊອກຫາບັນດາຂໍ້ຄິດເຫັນທີ່ເປັນປະໂຫຍດ ຫຼື ບັນຫາທີ່ບໍ່ເໝາະສົມ ແລະ ມີມາດຕະການແກ້ໄຂປັບປຸງແຜນການຄຸ້ມຄອງໃຫ້ເໝາະສົມ ກັບຄວາມເປັນຈິງ, ເຊິ່ງຈະເຮັດໃຫ້ມີປະສິດທິພາບສູງດ້ານເສດຖະກິດ-ສັງຄົມ-ສິ່ງແວດລ້ອມ.

## 2.5. ການປົກປັກຮັກສາສິ່ງແວດລ້ອມໃນພື້ນທີ່

ໃນການເຄື່ອນໄຫວຄຸ້ມຄອງປ່າຂອງບໍລິສັດເຊັ່ນ: ການຜະລິດເບ້ຍໄມ້, ການປູກປ່າ, ການບົວລະບັດປ່າ, ການຂຸດຄົ້ນຢາງພາລາ ແລະ ໄມ້, ການຂົນສົ່ງ, ການປຸງແຕ່ງ, ການກໍ່ສ້າງຖະໜົນຫົນທາງ, ການກໍ່ສ້າງ ພື້ນຖານໂຄງລ່າງ ... ຕ້ອງຫຼຸດຜ່ອນການສິ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມໃນພື້ນທີ່ (ດິນເຊາະເຈື່ອນ, ຜົນກະທົບເຖິງການໄຫຼຂອງນ້ຳ, ຜົນກະທົບຕໍ່ຊີວະນາງພັນ, ຜົນກະທົບທາງລົບຕໍ່ຄຸນນະພາບແລະລະດັບນ້ຳໃນພື້ນທີ່, ສຽງລົບກວນ, ... )

## 2.6. ສ້າງເງື່ອນໄຂໃຫ້ຊຸມຊົນໄດ້ຮັບຜົນປະໂຫຍດຈາກການຜະລິດດຳເນີນທຸລະກິດ

- ບໍລິສັດໃຫ້ບຸລິມະສິດແລະສ້າງເງື່ອນໄຂສູງສຸດໃຫ້ປະຊາຊົນທ້ອງຖິ່ນເຂົ້າຮ່ວມ ການເຄື່ອນໄຫວຄຸ້ມຄອງປ່າໄມ້ຂອງບໍລິສັດເຊັ່ນ: ຜະລິດເບ້ຍໄມ້, ປູກ ແລະ ບົວລະບັດປ່າປູກ, ປົກປັກຮັກສາປ່າໄມ້, ຂຸດຄົ້ນຢາງພາລາ, ສົ່ງເສີມບົດບາດແລະຄວາມເຊື່ອໝັ້ນຂອງປະຊາຊົນໃນທ້ອງຖິ່ນ.

- ຖ້າໜ່ວຍງານ ຫຼື ບຸກຄົນທີ່ກຳລັງປະຕິບັດວຽກງານຄຸ້ມຄອງປ່າໄມ້ເຮັດໃຫ້ເກີດຄວາມເສຍຫາຍຕໍ່ເສດຖະກິດຂອງ ປະຊາຊົນຫຼືຊຸມຊົນ, ໜ່ວຍງານ ຫຼື ບຸກຄົນທີ່ສ້າງຄວາມເສຍຫາຍດັ່ງກ່າວຕ້ອງໄດ້ຊົດເຊີຍໃຫ້ຜູ້ເສຍຫາຍ, ລະດັບການຊົດເຊີຍແມ່ນສອດຄ່ອງຕາມມູນຄ່າທ້ອງຕະຫຼາດ.

## 3. ແກ້ໄຂການລະເມີດ

ຫ້າມບໍ່ໃຫ້ໜ່ວຍງານ ແລະ ພະນັກງານກຳມະກອນທັງໝົດໃນບໍລິສັດເຮັດສິ່ງທີ່ມີຜົນກະທົບທາງລົບເຖິງຊື່ສຽງຂອງບໍລິສັດຕໍ່ກັບຊຸມຊົນ ຫຼື ເຮັດໃຫ້ເກີດຄວາມເສຍຫາຍທາງດ້ານເສດຖະກິດຂອງບໍລິສັດ, ຖ້າຫາກລະເມີດຈະຖືກໃສ່ລະບຽບຕາມລະບຽບການທີ່ວາງອອກ.

ຂ້າງເທິງນີ້ແມ່ນກົດລະບຽບ ວ່າດ້ວຍການເຄົາລົບສິດຂອງຊຸມຊົນໃນພື້ນທີ່ທີ່ບໍລິສັດດຳເນີນກິດຈະການ. ກົດລະບຽບສະບັບນີ້ນຳໃຊ້ກັບບັນດາຫົວໜ່ວຍທີ່ສັງກັດຢູ່ບໍລິສັດ ແລະ ພະນັກງານກຳມະກອນທັງໝົດຂອງ ບໍລິສັດ ດັກລັກ ຣັບເບີ ຈຳກັດ. ຮຽກຮ້ອງໃຫ້ບັນດາໜ່ວຍງານ ແລະ ບຸກຄົນໃນບໍລິສັດປະຕິບັດຢ່າງເຂັ້ມງວດ; ກົດລະບຽບສະບັບນີ້ມີຜົນນຳໃຊ້ນັບແຕ່ລົງລາຍເຊັນເປັນຕົ້ນໄປ.

**ອຳນວຍການບໍລິສັດ**

ກະຊວງ ກະສິກຳ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD ແຂວງ ຈຳປາສັກ

Nguyễn Đức Hạnh

*ບ່ອນສົ່ງ:*

- ບັນດາບ້ານໃນເຂດໂຄງການ;
- ຄະນະອຳນວຍການ ບສ;
- ບັນດາຫ້ອງການ ບສ;
- ບັນດາໜ່ວຍງານ;
- ສຳເນົາ, ຄະນະ FSC.